ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກະຊວງການເງິນ ເຜີຍແຜ່ວຽກງານຕ້ານການຟອກເງິນ




ກະຊວງການເງິນ ເຜີຍແຜ່ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ໃນວັນທີ 16 ກຸມພາ 2021 ທີ່ຫ້ອງປະຊຸມກະຊວງການເງິນ, ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ຮອງລັດຖະມົນຕີກະຊວງການເງິນ ແລະ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ); ພ້ອມນີ້, ກໍ່ມີບັນດາພະນັກງານຂັ້ນນຳ-ຂັ້ນວິຊາການຈາກກະຊວງດັ່ງກ່າວ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ການເຜີຍແຜ່ ແລະ ເຊື່ອມຊຶມວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນຄັ້ງນີ້ ເພື່ອເຜີຍແຜ່ວຽກງານ AML/CFT ໂດຍສະເພາະກົດໝາຍ, ລະບຽບການທີ່ກ່ຽວຂ້ອງໃຫ້ເຂົ້າໃຈຢ່າງເລິກເຊິ່ງ ມີຄວາມຮັບຜິດຊອບສູງໃນການປຶກສາຫາລື, ແລກປ່ຽນຄຳເຫັນຢ່າງກົງໄປກົງມາ ເພື່ອໃຫ້ສາມາດນຳໄປຈັດຕັ້ງປະຕິບັດຕົວຈິງໄດ້ຢ່າງເໝາະສົມ ແລະ ມີປະສິດທິພາບສູງ ພ້ອມທັງມີຜົນສຳເລັດຢ່າງຈົບງາມ ໂດຍເນັ້ນໃສ່ພາບລວມການຈັດຕັ້ງປະຕິບັດໃນໄລຍະຜ່ານມາ, ການກະກຽມໃຫ້ແກ່ການປະເມີນຜົນຮອບດ້ານວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ ໃນປີ 2020-2021 ຊຶ່ງວຽກດັ່ງກ່າວມີຄວາມສຳຄັນຕໍ່ສະພາບການດຳເນີນເສດຖະກິດໃນປະເທດ, ສປປ ລາວ ກໍ່ຄືລັດຖະບານ ໄດ້ສ້າງຄະນະກຳມະການລະດັບຊາດ ໂດຍປະກອບມີຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ເປັນປະທານ; ມີລັດຖະມົນຕີ ແລະ ຮອງລັດຖະມົນຕີຈາກ 10 ກະຊວງ ແລະ ທຽບເທົ່າເຂົ້າຮ່ວມໃນຄະນະ ເພື່ອສຸມໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວ ບົນພື້ນຖານເງື່ອນໄຂ 40 ຂໍ້ແນະນຳ ແລະ 11 ປະສິດທິຜົນຂອງອົງການຕ້ານການຟອກເງິນສາກົນ ທີ່ ສປປ ລາວ ເຂົ້າຮ່ວມເປັນສະມາຊິກ.



ໃນໄລຍະຜ່ານມາ ສປປ ລາວ ໄດ້ຮັບການປະເມີນຜົນຮອບດ້ານຄັ້ງທຳອິດໃນປີ 2010 ຊຶ່ງຜົນການປະເມີນໃນຄັ້ງນັ້ນ ສປປ ລາວ ຕົກຢູ່ໃນບັນຊີເທົາ ເຮັດໃຫ້ ສປປ ລາວ ພົບຄວາມຫຍຸ້ງຍາກຫຼາຍດ້ານ; ແຕ່ຢ່າງໃດກໍດີ, ສປປ ລາວ ໄດ້ສູ້ຊົນ, ປັບປຸງແກ້ໄຂຂໍ້ຄົງຄ້າງຕ່າງໆ ເປັນຕົ້ນໄດ້ອອກບັນດານິຕິກຳທີ່ຕິດພັນ ຈຳນວນ 28 ສະບັບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນໃຫ້ສອດຄ່ອງຕາມມາດຖານສາກົນ, ສ້າງກົນໄກ ແລະ ຂັ້ນຕອນຕ່າງໆປະຕິບັດ ໃຫ້ເກີດປະສິດທິຜົນຕາມນິຕິກຳ ທີ່ວາງອອກໄດ້ຈຳນວນໜຶ່ງ; ມາຮອດປີ 2017 ຈຶ່ງເຮັດໃຫ້ ສປປ ລາວ ສາມາດອອກຈາກບັນຊີເທົາຂອງສາກົນ. ຫຼັງຈາກນັ້ນ, ກໍ່ໄດ້ດຳເນີນການປະເມີນຄວາມສ່ຽງລະດັບຊາດດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳເລັດໃນກາງປີ 2018 ຊຶ່ງສາມາດກຳນົດໄດ້ 8 ຂະແໜງການທຸລະກິດ ທີ່ມີຄວາມສ່ຽງຈະຖືກສວຍໃຊ້ໃນຂະບວນການຟອກເງິນ ແລະ ກຳນົດໄດ້ 7 ຄວາມຜິດຕົ້ນ ທີ່ເປັນໄພຂົ່ມຂູ່ ຫຼື ມີຄວາມສ່ຽງຕໍ່ການຟອກເງິນ.

ເພື່ອກະກຽມການປະເມີນຜົນຮອບດ້ານ ຄັ້ງທີ 2 ໃນສົກປີ 2020-2021, ລັດຖະບານ ໄດ້ສ້າງຕັ້ງຄະນະສະເພາະກິດ ຊຶ່ງນຳໂດຍທ່ານຮອງນາຍົກລັດຖະມົນຕີ ແລະ ຂັ້ນລັດຖະມົນຕີ ຈຳນວນ 25 ທ່ານຈາກ 14 ກະຊວງ ປະກອບຢູ່ໃນຄະນະກຳມະການ ແລະ ໄດ້ແບ່ງອອກເປັນ 4 ກຸ່ມວຽກ ໃນນີ້ມີວຽກງານເຜີຍແຜ່ ແລະເຊື່ອມຊຶມ; ວຽກງານນິຕິກຳ ແລະ ກົນໄກ; ວຽກງານຄຸ້ມຄອງ ແລະ ວຽກງານການດຳເນີນຄະດີ ໂດຍວຽກງານເຜີຍແຜ່ ແລະ ເຊື່ອມຊຶມ ປະກອບມີຮອງຜູ້ວ່າການ ທຫລ; ຮອງລັດຖະມົນຕີ ກະຊວງການເງິນ ແລະ ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເຊິ່ງມີໜ້າທີ່ ແລະ ຮັບຜິດຊອບໃນການສ້າງຄວາມເຂົ້າໃຈຕໍ່ກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເວົ້າສະເພາະຄວາມເຂົ້າໃຈຕໍ່ກັບຄວາມສ່ຽງ, ສ້າງແຜນການຈັດຕັ້ງປະຕິບັດ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ເຫັນວ່າບໍ່ສອດຄ່ອງກັບມາດຖານສາກົນ ໂດຍມີສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນກອງເລຂາເຮັດວຽກໃນການປະສານງານ ແລະ ສາມາດມີຜົນຄືບໜ້າເປັນກ້າວໆ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ